ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

=== 000 ===

ກະຊວງສຶກສາທິການ　　　　　　　　　　　　　　　　　　ເລກທີ　　　　/ສສ.ສປຄ.09

ນະຄອນຫຼວງວຽງຈັນ, ວັນທີ

## <u>ສະບັບຮ່າງ</u>

## <u>ມາດຕະຖານຄຸນນະພາບການສຶກສາສຳລັບການສຶກສາສາຍສາມັນ(ຊັ້ນປະຖົມສຶກສາ)</u>

ການປະກັນຄຸນນະພາບການສຶກສາເປັນການບໍລິຫານຈັດການດ້ານວິຊາການແລະການດຳເນີນກິດຈະກຳຕາມປົກກະຕິຂອງສະຖານການສຶກສາເພື່ອພັດທະນາຜູ້ຮຽນໃຫ້ມີຄຸນະພາບຕາມມາດຕະຖານການສຶກສາຊຶ່ງຈະເຮັດໃຫ້ການຈັດຕັ້ງພັກ-ລັດ, ສັງຄົມ ແລະ ປະຊາຊົນມີຄວາມໝັ້ນໃຈໃນລະບົບ ການສຶກສາແຫ່ງຊາດ ການປະກັນຄຸນນະພາບການສຶກສາ ເປັນລະບົບທີ່ມີການດຳເນີນໂດຍບຸກຄະລາກອນໃນສະຖານການສຶກສາ ແລະ ໜ່ວຍງານຕົ້ນສັງກັດຄວບຄູ່ກັບການດຳເນີນການກວດສອບ ແລະ ປະເມີນຜົນຈາກໜ່ວຍງານພາຍນອກ (ສູນຮັບປະກັນຄຸນນະພາບ ທີ່ຕັ້ງຂຶ້ນໃໝ່) ຈຶ່ງເປັນປັດໃຈສຳຄັນ ໃນການພັດທະນາລະບົບການປະກັນຄຸນະພາບພາຍໃນຂອງສະຖານສຶກສາທັງພາກລັດ ແລະ ພາກເອກະຊົນໃຫ້ມີຄວາມພ້ອມໃນການຮັບການກວດສອບ ແລະ ປະເມີນຜົນຈາກພາຍນອກ ເພື່ອການປັບປຸງແກ້ໄຂໃຫ້ລະບົບການສຶກສາມີຄຸນນະພາບດີ ຂຶ້ນຢ່າງຕໍ່ເນື່ອງ.

ດັ່ງນັ້ນສູນຮັບປະກັນຄຸນນະພາບຈຶ່ງໄດ້ຄົ້ນຄ້ວາແລະນຳສະເໜີ<u>ຮ່າງມາດຕະຖານຄຸນະພາບ</u>ການສຶກສາສຳລັບຊັ້ນປະຖົມສຶກສາສາຍສາມັນນີ້ຂຶ້ນເພື່ອເປັນບ່ອນອີງໃນການຄົ້ນຄ້ວາ ແລະ ປັບປຸງໃຫ້ສອດຄ່ອງກັບທິດທາງການປະຕິຮູບລະບົບການສຶກສາແຫ່ງຊາດ.

**ມາດຕະຖານແລະ ຕົວຊີ້ວັດ ສຳລັບຊັ້ນປະຖົມສຶກສາໄດ້ແບ່ງອອກເປັນ 3 ໝວດ ເພື່ອການປະເມີນຄຸນນະພາບຄື :ມາດຕະຖານດ້ານຜູ້ຮຽນ,ມາດຕະຖານດ້ານປັດໃຈ ແລະ ມາດຕະຖານດ້ານຂະບວນການ. ຊຶ່ງທັງໝົດນີ້ໃຫ້ໄປຕາມຈຸດໝາຍຂອງການກໍ່ສ້າງທີ່ພັກ - ລັດໄດ້ກຳນົດຂຶ້ນ.**

ສະນັ້ນ, ມາດຕະຖານ ແລະ ຕົວຊີ້ວັດດ້ານຜູ້ຮຽນໃນຊັ້ນປະຖົມສຶກສາບົນພື້ນຖານ 5 ຫຼັກມູນຂອງການສຶກສາ,ເພື່ອໃຫ້ບັນດາທ່ານໄດ້ທາບທາມແລະປະກອບຄຳຄິດເຫັນ,ຈະໄດ້ປັບປຸງແກ້ໄຂແລ້ວນຳສະເໜີຂັ້ນເທິງອະນຸມັດຈັດຕັ້ງປະຕິບັດໃນສົກຮຽນຕໍ່ໄປ.ມາດຕະຖານການສຶກສາສຳລັບຊັ້ນປະຖົມສຶກສາສາຍສາມັນ ປະກອບດ້ວຍ <u>*24 ມາດຕະຖານ ແລະ115 ຕົວຊີ້ວັດ*</u> ດັ່ງລຸ່ມນີ້ :

ສະບັບຮ່າງ

## I . ມາດຕະຖານດ້ານຜູ້ຮຽນ (ມີ 10 ມາດຕະຖານ ແລະ 60 ຕົວຊີ້ວັດ)

**ມາດຕະຖານທີ່ 1 : (ຄຸນສົມບັດສຶກສາ) : ດ້ານຄວາມຮູ້ ຄາດໝາຍຕໍ່າສຸດ**

**ຕົວຊີ້ວັດ**

1. ມີຄວາມຮູ້ເບື້ອງຕົ້ນກ່ຽວກັບຊາດ, ປະເທດຊາດ, ກາຊາດ, ທຸງຊາດ, ເພງຊາດ, ນະຄອນຫຼວງ, ວິລະບຸລຸດຂອງຊາດ ແລະ ມູນເຊື້ອອັນດີງາມຂອງຊາດ.
2. ຮູ້ຄຸນຄ່າຂອງການອອກແຮງງານ, ມີນໍ້າໃຈມະນຸດສະທໍາ, ມີຄຸນສົມບັດ ແລະ ກິລິຍາມາລະຍາດຂອງນັກຮຽນ.
3. ມີຄວາມຮູ້ເບື້ອງຕົ້ນກ່ຽງກັບການພົວພັນລະຫວ່າງໝູ່ຄູ່, ລວມໝູ່ ແລະ ຄວາມຮັບຜິດຊອບຂອງແຕ່ລະຄົນໃນຄອບຄົວ.
4. ມີຄວາມຮູ້ເບື້ອງຕົ້ນກ່ຽວກັບລະບຽບກົດໝາຍຂອງບ້ານເມືອງ ແລະ ຮີດຄອງປະເພນີອັນດີງາມຂອງທ້ອງຖິ່ນ, ຮູ້ຄໍາສັ່ງສອນຂອງຜູ້ນໍາ.
5. ມີວິໄນ, ມີຄວາມຮັບຜິດຊອບ, ກົດລະບຽບ ແລະ ຫຼັກການຄຸ້ມຄອງໂຮງຮຽນ, ຂອງອົງການຈັດຕັ້ງເຍົາວະຊົນ, ຊາວໜຸ່ມ.
6. ມີຄວາມຊື່ສັດສຸດຈະລິດ,ຟັງຄວາມພໍ່ແມ່, ເຄົາລົບຄູອາຈານ, ຮັກແພງໝູ່ເພື່ອນ, ເຄົາລົບນັບຖືຜູ້ອາວຸໂສ, ຜູ້ອອກແຮງງານ, ຜູ້ເສຍອົງຄະ ແລະ ຜູ້ເສຍສະຫຼະຊີວິດເພື່ອປະເທດຊາດ, ຮັກບ້ານເກີດເມືອງນອນ ແລະ ທ້ອງຖິ່ນ .
7. ຮູ້ຖາມສະບາຍດີ, ຮູ້ຂອບໃຈ, ຮູ້ຄອບລາ, ຮູ້ສະລະພາບຄວາມຜິດ ແລະ ຮູ້ຮັກສາຄໍາໝັ້ນສັນຍາ.
8. ມີຄວາມເມດຕາກະລຸນາ: ເອື້ອເຟື້ອເພື່ອແຜ່, ເສຍສະລະເພື່ອສ່ວນລວມ ແລະ ຮັກສິ່ງແວດລ້ອມ.
9. ປະຢັດມັດທະຍັດ, ຮູ້ນໍາໃຊ້ສິ່ງຂອງ ແລະ ຊັບສິນສ່ວນຕົວ ແລະ ສ່ວນລວມຕະຫຼອດຮອດຊັບພະຍາກອນທໍາມະຊາດຢ່າງປະຢັດ ແລະ ກຸ້ມຄ່າ .
10. ແຕ່ລະພາກຮຽນຕ້ອງມີສະຖິຕິກ່ຽວກັບການຈັດລະດັບຄຸນສົມບັດຂອງນັກຮຽນ, ຫ້ອງຮຽນ ແລະ ໂຮງຮຽນຕາມລະບຽບການຄຸ້ມຄອງໂຮງຮຽນທີ່ກະຊວງສຶກສາໄດ້ອະນຸມັດ
11. ນັກຮຽນຕ້ອງໄດ້ຮັບຄະແນນຄຸນສົມບັດປະເພດດີ 80% ຂຶ້ນໄປ, ບໍ່ມີປະເພດຄຸນສົມບັດອ່ອນ.

**ມາດຕະຖານທີ່ 2 : (ຄຸນສົມບັດສຶກສາ) ດ້ານຄວາມສາມາດ ຄາດໝາຍຕໍ່າສຸດ**

**ຕົວຊີ້ວັດ :**

1. ສາມາດຮ້ອງເພງຊາດໄດ້ ແລະ ປະຕິບັດກົດລະບຽບຂອງໂຮງຮຽນໄດ້ດີ .

2. ສາມາດປະຕິບັດກົດລະບຽບຈະລາຈອນ, ລະບຽບຂອງເຢົາວະຊົນໄດ້ດີ,ມີແບບແຜນດຳລົງຊີວິດໃນຄອບຄົວ,ໃນໂຮງຮຽນ ແລະໃນສັງຄົມໄດ້ດີ.
3. ສາມາດປະຕິບັດຄຳສັ່ງສອນຂອງພໍ່ແມ່, ຂອງຄູອາຈານ ແລະ ຂອງຜູ້ນຳ.
4. ສາມາດຊ່ວຍເຫຼືອຄອບຄົວ, ໝູ່ຄູ່ ແລະ ສັງຄົມໄດ້.
5. ມີຄວາມພາກພຽນໃນການຮ່ຳຮຽນ ແລະ ການອອກແຮງງານຢູ່ໃນຄອບຄົວ, ຢູ່ໃນໂຮງຮຽນ ແລະໃນສັງຄົມ.

**ມາດຕະຖານທີ່ 3 (ດ້ານປັນຍາສຶກສາ) : ດ້ານຄວາມຮູ້ ມີຄວາມສາມາດໃນການຄິດ,ວິເຄາະບັນຫາໄດ້ ມີຄວາມຄິດສ້າງສັນຄົ້ນຄິດຕຶກຕອງ ແລະ ມີວິໄສທັດ:**

**ຕົວຊີ້ວັດ:**

1. ມີຄວາມຮູ້ເບື້ອງຕົ້ນກ່ຽວກັບພາສາລາວ
2. ມີຄວາມຮູ້ກ່ຽວກັບເລກ 4 ປະການ(ບວກ-ລົບ-ຄູນ-ຫານ)
3. ມີຄວາມຮູ້ເບື້ອງຕົ້ນກ່ຽວກັບບາງປະກົດການຂອງທຳມະຊາດ ແລະ ສັງຄົມທີ່ສົ່ງຜົນກະທົບຕໍ່ມະນຸດ, ສັດ, ພືດ ແລະ ສິ່ງແວດລ້ອມ.
4. ມີຄວາມຮູ້ເບື້ອງຕົ້ນກ່ຽວກັບຮ່າງກາຍຂອງຄົນ, ຮູ້ຫຼັກອະນາໄມສ່ວນຕົວ ແລະ ສ່ວນລວມ.
5. ມີຄວາມຮູ້ເບື້ອງຕົ້ນກ່ຽວກັບພູມສາດ-ປະຫວັດສາດ-ກົດໝາຍແລະມູນເຊື້ອອັນດີງາມຂອງຊາດ ແລະ ຂອງທ້ອງຖິ່ນຕົນ.

**ມາດຕະຖານທີ່ 4 (ດ້ານປັນຍາສຶກສາ) : ດ້ານຄວາມສາມາດ ຄາດໝາຍຕ່ຳສຸດ**

**ຕົວຊີ້ວັດ :**

1. ສາມາດນຳໃຊ້ພາສາລາວເຂົ້າໃນການຕິດຕໍ່ສື່ສານ(ເວົ້າ-ຟັງ-ອ່ານ-ຂຽນ) ແລະຖ່າຍທອດຄວາມນຶກຄິດໄດ້ຢ່າງຖືກຕ້ອງ.
2. ສາມາດແກ້ເລກ 4 ປະການ, ຄິດໄລ່ໃນໃຈໄດ້ດີ ແລະ ສາມາດປ່ຽນຫົວໜ່ວຍວັດແທກບາງອັນທີ່ງ່າຍດາຍໄດ້.
3. ສາມາດສັງເກດ-ຕີລາຄາ-ພັນລະນາ ແລະ ອະທິບາຍບາງປະກົດການໃນທຳມະຊາດ ແລະຊີວິດປະຈຳວັນໄດ້.
4. ສາມາດນຳໃຊ້ອຸປະກອນການຮ່ຳຮຽນ, ການອອກແຮງງານ ແລະ ການທົດລອງທີ່ງ່າຍດາຍໄດ້.
5. ປະຕິບັດຕາຕະລາງຮຽນ, ມີລະບຽບໃນການຮ່ຳຮຽນ, ມີຄວາມພາກພຽນ ແລະ ດຸໝັ່ນ, ມັກຊອກຮູ້ຮ່ຳຮຽນແລະຊ່ວຍເຫຼືອໝູ່ເພື່ອນໃນການຮ່ຳຮຽນ.
6. ປະຢັດເວລາ, ປົກປັກຮັກສາອຸປະກອນການຮຽນຂອງຕົນ ແລະ ໂຮງຮຽນ, ຕ້ານການປະພຶດທີ່ຝືນຕໍ່ລະບຽບວິໄນຂອງໂຮງຮຽນ.
7. ສາມາດຈຳແນກປະເພດຂໍ້ມູນ, ປຽບທຽບ, ຊັ່ງຊາ, ມີຄວາມຄິດສັງລວມ ແລະ ສະຫຼຸບບັນຫາໄດ້

8. ສາມາດປະເມີນຄ່າຄວາມເຊື່ອຖືຂອງຂໍ້ມູນ, ຮູ້ຈັກພິຈາລະນາຂໍ້ດີ - ຂໍ້ເສຍ, ຄວາມຖືກ - ຜິດ, ລະບຸເຫດ - ຜົນ, ຄົ້ນຫາຄຳຕອບ ແລະ ມີປະຕິກິລິຍາໃນການແກ້ໄຂບັນຫາ ແລະ ຕັດສິນໃຈໄດ້ຢ່າງສົມເຫດ - ສົມຜົນ ແລະ ມີຄວາມຖືກຕ້ອງເໝາະສົມ.
9. ມີຄວາມຄິດລິເລີ່ມ, ສ້າງສັນ, ມີຈິນຕະນາການ, ສາມາດຄາດການ ແລະ ກຳນົດເປົ້າໝາຍໄດ້.

**ມາດຕະຖານທີ່ 5 : ຜູ້ຮຽນມີຄວາມຮັບຮູ້ ,ຄວາມເຂົ້າໃຈ ແລະ ຄວາມຊຳນິຊຳນານທີ່ຈຳເປັນຕາມຫຼັກສູດ**

**ຕົວຊີ້ວັດ**

1. ມີຜົນການຮຽນ(ຜ່ານການກວດກາປາກເປົ່າ, ກວດກາປະຈຳເດືອນ, ສອບເສັງປະຈຳພາກຮຽນ, ປະຈຳປີ) ບັນທຶກຜົນການຮຽນໃນກຸ່ມວິຊາ, ໝວດວິຊາຮຽນ, ຄະແນນບໍ່ຕ່ຳກວ່າເກນມາດຕະຖານຂັ້ນຕ່ຳ (ຄະແນນ 5) (ເຊັ່ນ: ຄະນິດສາດ, ວິທະຍາສາດ, ພາສາລາວ, ພາສາອັງກິດ, ສັງຄົມສາດ, ຄອມພິວເຕີ ແລະ ວິຊາອື່ນໆ )
2. ຜົນການຮຽນຂອງນັກຮຽນພາຍໃນໂຮງຮຽນມີຄວາມກ້າວໜ້າໄດ້ສະແດງອອກ :
   a. ແຕ່ລະພາກຮຽນ ມີຕົວເລກສະຖິຕິການວັດຜົນການຮຽນຂອງຜູ້ຮຽນທຸກຄົນ
   b. ຜົນການຮຽນຕ້ອງຜ່ານເກນ (ຄະແນນ 5 ຂຶ້ນໄປ) ກວມ 90% ຂອງຈຳນວນຜູ້ຮຽນ,ໃນນັ້ນ 60% ຕ້ອງແມ່ນນັກຮຽນເກັ່ງ, ນັກຮຽນປະລະການຮຽນບໍ່ເກີນ 1% ແລະນັກຮຽນຄ້າງຫ້ອງ ບໍ່ ເກີນ 10%
   c. ໂຮງຮຽນຕ້ອງມີທີມນັກຮຽນເກັ່ງແລະໄດ້ຮັບລາງວັນໃດໜຶ່ງໃນລະດັບເມືອງ,ລະດັບແຂວງ ຫຼື ລະ ດັບຊາດ
3. ມີຄວາມສາມາດໃນການໃຊ້ພາສາເພື່ອການສື່ສານ.

**ມາດຕະຖານທີ່ 6 : ຜູ້ຮຽນມີທັກສະໃນການສະແດງຫາຄວາມຮູ້ດ້ວຍຕົນເອງ, ຮັກການຮຽນຮູ້ ແລະ ພັດທະນາຕົນເອງຢ່າງຕໍ່ເນື່ອງ.**

**ຕົວຊີ້ວັດ**

1. ມີຄວາມກະຕືລືລົ້ນ,ສົນໃຈໃນການຮຽນຮູ້ຈາກແຫຼ່ງຕ່າງໆ ແລະ ຮູ້ຈັກຕັ້ງຄຳຖາມເພື່ອຫາເຫດຜົນ.
2. ຮັກການອ່ານ, ສາມາດຮຽນ ແລະ ຄົ້ນຄ້ວາຫາຄວາມຮູ້ໃນຫ້ອງສະໝຸດ ຫຼື ແຫຼ່ງຄວາມຮູ້ ແລະ ສື່ຕ່າງໆ ທັງໃນ ແລະ ນອກສະຖານສຶກສາ.
3. ສາມາດສະຫຼຸບປະເດັນບັນຫາຈາກການຮຽນຮູ້ ແລະ ປະສົບການໄດ້ຢ່າງຖືກຕ້ອງດ້ວຍຕົນເອງ.

**ມາດຕະຖານທີ່ 7 : ຜູ້ຮຽນມີທັກສະໃນການເຮັດວຽກ, ຮັກການເຮັດວຽກ, ສາມາດເຮັດວຽກຮ່ວມກັບຄົນອື່ນໄດ້ ແລະ ມີເຈດຕະນາຄະຕິທີ່ດີ :**

**ຕົວຊີ້ວັດ :**

1. ສາມາດເຮັດວຽກຕາມຄວາມຮັບຜິດຊອບໄດ້, ຮູ້ຈັດລຳດັບຂັ້ນຕອນແລະຜົນງານຢ່າງມີປະສິດທິພາບ.
2. ດຸໝັ່ນ, ຂະຫຍັນ, ອົດທົນ, ລະອຽດຮອບຄອບໃນການຮ່ຳຮຽນ, ເຮັດວຽກງານ, ສາມາດເຮັດວຽກງານໄດ້ຢ່າງມີຄວາມສຸກ ແລະ ພູມໃຈໃນຜົນງານຂອງຕົນ.
3. ສາມາດຮຽນຮູ້ ແລະ ເຮັດວຽກເປັນທີມ ( ຊ່ວຍເຫຼືອຜູ້ອື່ນ, ບໍ່ເອົາລັດເອົາປຽບ, ໃຫ້ຄວາມຮ່ວມມື, ຍອມຮັບຟັງຄວາມຄິດເຫັນ ແລະ ຄວາມສາມາດຂອງຜູ້ອື່ນ, ຮ່ວມຮັບຜິດຊອບຜົນງານຂອງກຸ່ມ ).
4. ມີເຈດຕະນາຄະຕິທີ່ດີ ຕໍ່ອາຊີບສຸດຈະລິດ.
5. ສາມາດນຳໃຊ້ເຄື່ອງມືອອກແຮງງານທີ່ງ່າຍດາຍ, ສາມາດເຮັດບາງວຽກໃນການປູກຝັງ, ລ້ຽງສັດ ແລະຫັດຖະກຳໄດ້ ແລະອອກແຮງງານຮັບໃຊ້ຕົນເອງ ແລະຄອບຄົວ.

**ມາດຕະຖານທີ່ 8 : ຜູ້ຮຽນມີສຸຂະນິໄສ, ສຸຂະພາບກາຍ ແລະ ສຸຂະພາບຈິດທີ່ດີ**

**ຕົວຊີ້ວັດ :**

1. ມີນ້ຳໜັກ ແລະ ສ່ວນສູງຕາມເກນມາດຕະຖານ.
2. ມີສະມັດຕະພາບທາງກາຍຕາມເກນມາດຕະຖານ
3. ມີຄວາມຮູ້ເບື້ອງຕົ້ນກ່ຽວກັບ: ຄຸນປະໂຫຍດຂອງກິລາກາຍະກຳ, ການອະນາໄມ, ສິ່ງແວດລ້ອມ ແລະ ຮູ້ພະຍາດຕິດແປດ.
4. ຮູ້ລະບຽບກ່ຽວກັບຖັນແຖວ, ການຍ່າງ, ການແລ່ນ, ການຫຼິ້ນ, ການຝຶກຮ່າງກາຍ ແລະ ການຮັກສາສຸຂະພາບ.
5. ມີຈິດໃຈແຈ່ມໃສ, ມີມະນຸດສຳພັນທີ່ດີກັບຄູ, ເພື່ອນ ແລະ ບຸກຄົນທົ່ວໄປ.
6. ຮູ້ຈັກຮັກສາສຸກຂະພາບ ແລະ ປ້ອງກັນຕົວເອງບໍ່ໃຫ້ເກີດອຸປະຕິເຫດ.
7. ມີຄວາມຮູ້, ຄວາມເຂົ້າໃຈກ່ຽວກັບໂທດຂອງສິ່ງເສບຕິດ ແລະ ສິ່ງມຶນເມົາ, ບໍ່ເສບສິ່ງເສບຕິດ ແລະ ປອດໄພຈາກສິ່ງມຶນເມົາ.

**ມາດຕະຖານທີ່ 9 : ຜູ້ຮຽນມີອາລົມດີ ແລະ ລັກສະນະນິໄສດ້ານກິລາກາຍະກຳ**

**ຕົວຊີ້ວັດ**

1. ຜູ້ຮຽນມີຄວາມຊື່ນຊົມ, ຫ້າວຫັນ , ຮ່ວມກິດຈະກຳດ້ານກິລາກາຍະກຳ ທີ່ໂຮງຮຽນ ຫຼື ຊຸມຊົນຈັດຂຶ້ນ .
2. ສາມາດຫັດກາຍະບໍລິຫານຖືກກັບຈັງຫວະຂອງບົດ, ລຽນແຖວໃຫ້ຖືກຕາມວິທີການຈັດແຖວ, ການຍ່າງ ແລະ ການແລ່ນ.

3. ຜູ້ຮຽນມັກຫຼິ້ນກິລາກາຍະກຳ, ມີຈິດໃຈລວມໝູ່, ວ່ອງໄວ, ຄ່ອງແຄ້ວ, ກ້າຫານ, ຊື່ສັດ ແລະ ຮັບປະກັນຄວາມປອດໄພໃນການຫຼິ້ນ.
4. ມີສະຕິລະວັງຕົວໃນການປ້ອງກັນຄວາມສະຫງົບ, ມີສະຕິຮັກອະນາໄມສ່ວນຕົວ ແລະສ່ວນລວມ.

**ມາດຕະຖານທີ່ 10 : ຜູ້ຮຽນມີອາລົມດີ ແລະ ລັກສະນະນິໃສດ້ານສິນລະປະ, ວັນນະຄະດີ**

**ຕົວຊີ້ວັດ**

1. ຜູ້ຮຽນມີຄວາມຮູ້ເບື້ອງຕົ້ນກ່ຽວກັບຄວາມງາມ,ຮູ້ຄວາມໝາຍຂອງການດຳລົງຊີວິດທີ່ສຸພາບຮຽບຮ້ອຍ.
2. ຮູ້ແຕ້ມຮູບ, ດົນຕີ, ບົດເພັງ, ບົດກາບກອນ, ແບບຟ້ອນ ແລະ ຂັບລຳຈຳນວນໜຶ່ງ.
3. ຮັກຄວາມສວຍງາມຂອງທຳມະຊາດ,ຮັກມະນຸດ,ຮັກສັດສາວາສິ່ງ ແລະຮັກບ້ານເກີດເມືອງນອນ.
4. ມັກ ແລະສາມາດຮ້ອງເພັງ,ຂັບລຳ,ຟ້ອນ,ເລົ່າເລື່ອງ,ແຕ້ມ,ປັ້ນ,ເຮັດເຄື່ອງຫັດຖະກຳ,ປະດັບປະດາຕົບແຕ່ງໄດ້.
5. ມີທ່າທີສຸພາບ,ວາຈາອ່ອນຫວານ,ປົກປັກຮັກສາສະຖານທີ່ຊຸມຊົນ,ຮ່ອງຮອຍວັດຖຸບູຮານປູນິຍະສະຖານ.
6. ສາມາດພັນລະນາຄວາມສວຍງາມຂອງທຳມະຊາດ, ມະນຸດ, ສັດ ແລະ ບ້ານເກີດເມືອງນອນໄດ້.
7. ຮູ້ນຸ່ງຖື, ຈັດແບ່ງບ່ອນຮຽນ, ບ່ອນນອນ,ບ່ອນກິນຢູ່ ແລະ ບ່ອນອອກແຮງງານໃຫ້ເປັນລະບຽບຮຽບຮ້ອຍ.
8. ຮູ້ຮັກສາສື່ - ອຸປະກອນການຮຽນຂອງຕົນ ແລະ ຂອງສ່ວນລວມໃຫ້ສະອາດ ບໍ່ໃຫ້ເສຍຫາຍ ແລະ ຊຽນໜັງສືຕ້ອງງາມ.

## II . <u>ມາດຕະຖານດ້ານປັດໃຈ</u> (ມີ 9 ມາດຕະຖານ ແລະ 27 ຕົວຊີ້ວັດ)

**ມາດຕະຖານທີ່ 11 : ຜູ້ບໍລິຫານມີຄຸນສົມບັດທີ່ດີ, ມີພາວະເປັນຜູ້ນຳ , ເປັນແບບຢ່າງແລະ ມີຄວາມສາມາດໃນການບໍລິຫານຈັດການ**

**ຕົວຊີ້ວັດ** :

1. ຜູ້ບໍລິຫານມີວິໄສທັດໃນການບໍລິຫານການສຶກສາໃຫ້ທັນກັບການປ່ຽນແປງ.
2. ຜູ້ບໍລິການມີຄວາມເປັນຜູ້ນຳ, ມີມະນຸດສຳພັນ ແລະ ເປັນທີ່ຍອມຮັບຂອງຜູ້ກ່ຽວຂ້ອງ/ຊຸມຊົນ.
3. ຜູ້ບໍລິຫານມີຄວາມກະຕືລືລົ້ນຕໍ່ໜ້າທີ່ວຽກງານ, ມີຈິດໃຈກ້ວາງຂວາງ ແລະ ເປັນປະຊາທິປະໄຕ.
4. ມີຄຸນສົມບັດ,ມີວິຊາສະເພາະແຕ່ຊັ້ນກາງຂຶ້ນໄປ,ໄດ້ຜ່ານວິຊາຄູ,ໄດ້ອົບຮົມກ່ຽວກັບການບໍລິຫານຄຸ້ມຄອງການສຶກສາ.

5. ຜູ້ອຳນວຍການໄດ້ສິດສອນຢ່າງໜ້ອຍ 3 ປີ ແລະ ຮອງຜູ້ອຳນວຍການຢ່າງໜ້ອຍ 2 ປີ

**ມາດຕະຖານທີ່ 12: ຄູມີຄຸນສົມບັດ,ມີຄຸນະທຳ ຈະລິຍະທຳ**

**ຕົວຊີ້ວັດ** :

1. ຄູມີທັດສະນະຄະຕິທີ່ດີຕໍ່ອາຊີບຄູ, ມີຄວາມເອື້ອອາທອນ, ເຂົ້າໃຈ ແລະເອົາໃຈໃສ່ຜູ້ຮຽນທຸກຄົນຢ່າງສະເໝີພາບ ແລະເທົ່າທຽມກັນ.
2. ຄູມີມະນຸດສຳພັນທີ່ດີ, ຄວບຄຸມອາລົມໄດ້ ແລະ ຮັບຟັງຄວາມຄິດເຫັນຂອງຜູ້ອື່ນ.
3. ຄູມີຄວາມຮັບຜິດຊອບ, ຊື່ສັດ ຕົງຕໍ່ເວລາ ອຸທິດຕົນໃຫ້ກັບການພັດທະນາຜູ້ຮຽນ.
4. ຄູວາງຕົນເໝາະສົມ, ເປັນແບບຢ່າງທີ່ດີໃນການປະພຶດດ້ານບຸຄະລິກພາບ.

**ມາດຕະຖານທີ່ 13: ຄູມີຄວາມສາມາດໃນການສະແຫວງຫາຄວາມຮູ້,ຄິດວິເຄາະ ແລະສ້າງອົງຄວາມຮູ້ເພື່ອພັດທະນາການຮຽນ-ການສອນ**

**ຕົວຊີ້ວັດ**

1. ຄູມີນິໄສຮັກການສະແຫວງຫາຄວາມຮູ້ ແລະຂໍ້ມູນຂ່າວສານຈາກແຫຼ່ງຕ່າງໆເພື່ອນຳມາພັດທະນາການຮຽນ-ການສອນ.
2. ຄູມີຄວາມສາມາດໃນການສຶກສາ, ວິໃຈ ເພື່ອພັດທະນາຂະບວນການຮຽນ-ການສອນ.
3. ຄູມີຄວາມສາມາດໃນການວິເຄາະບັນຫາ ແລະແກ້ໄຂສະຖານນະການໄດ້.

**ມາດຕະຖານທີ່ 14: ຄູມີຄວາມສາມາດໃນການຈັດການຮຽນ-ການສອນຢ່າງມີປະສິດທິພາບ ແລະ ເນັ້ນຜູ້ຮຽນເປັນສຳຄັນ.**

**ຕົວຊີ້ວັດ**

1. ຄູຮູ້,ເຂົ້າໃຈເຖິງເປົ້າໝາຍຫຼັກຂອງຫຼັກສູດ ແລະ ຈຸດໝາຍຂອງການກໍ່ສ້າງ ແລະ ຮູ້ວິທີສິດສອນທີ່ດີແທດເໝາະກັບຜູ້ຮຽນ.
2. ຄູມີຄວາມຮູ້, ຄວາມສາມາດໃນການພັດທະນາຫຼັກສູດ, ຮູ້ນຳໃຊ້ອຸປະກອນ, ສ້າງແຜນ ແລະຂະບວນການຮຽນ - ການສອນທີ່ເນັ້ນຜູ້ຮຽນເປັນສຳຄັນ.

3. ຄູມີຄວາມຮູ້, ຄວາມສາມາດໃນການປະເມີນຜົນການຮຽນ-ການສອນ ແລະ ການນຳຜົນການປະເມີນມາໃຊ້ ພັດທະນາຄຸນນະພາບ.

**ມາດຕະຖານທີ່ 15 : ຄູມີຄຸນນະວຸດ/ຄວາມຮູ້, ຄວາມສາມາດຖືກກັບວຽກງານທີ່ຮັບຜິດຊອບ ແລະ ມີຄູພຽງພໍ**

**ຕົວຊີ້ວັດ**

1. ຄູມີຄວາມຊຳນິຊຳນານ, ມີຄວາມຖະນັດ, ມີຄວາມຊ່ຽວຊານຖືກກັບວຽກງານທີ່ປະຕິບັດ.
2. ມີຈຳນວນຄູພຽງພໍ ແລະ ຄູໄດ້ມາດຕະຖານຕາມເກນທີ່ກະຊວງສຶກສາອະນຸມັດ.

**ມາດຕະຖານທີ່ 16 : ສະຖານສຶກສາມີຫຼັກສູດທີ່ເໝາະສົມກັບຜູ້ຮຽນ ແລະ ທ້ອງຖິ່ນ, ມີສື່ການຮຽນ - ການສອນ ທີ່ເອື້ອອຳນວຍຕໍ່ການຮຽນ.**

**ຕົວຊີ້ວັດ**

1. ມີຫຼັກສູດສ່ວນກາງ, ທ້ອງຖິ່ນ ແລະ ເນື້ອໃນຂອງຫຼັກສູດດັ່ງກ່າວທີ່ເໝາະສົມ, ສອດຄ່ອງກັບເປົ້າໝາຍການສຶກສາ ແລະ ຄວາມຕ້ອງການຂອງຜູ້ຮຽນ ແລະ ທ້ອງຖິ່ນ.
2. ມີສື່ການຮຽນ-ການສອນທີ່ເໝາະສົມ ແລະ ເອື້ອອຳນວຍຕໍ່ການຮຽນຮູ້ຂອງຜູ້ຮຽນ-ຊຸມຊົນ

**ມາດຕະຖານທີ່ 17 : ຊຸມຊົນ-ຜູ້ປົກຄອງມີການສະໜັບສະໜູນການບໍລິຫານ ແລະການພັດທະນາ ການສຶກສາ**

**ຕົວຊີ້ວັດ**

1. ຜູ້ປົກຄອງມີຄວາມຮັກ, ຄວາມເຂົ້າໃຈ ເອົາໃຈໃສ່ໃນການອົບຮົມສັ່ງສອນລູກຫຼານຂອງຕົນ ແລະ ເປັນແບບຢ່າງທີ່ດີ.
2. ຊຸມຊົນ-ຜູ້ປົກຄອງເຫັນຄວາມສຳຄັນຂອງການສຶກສາ ແລະມີຄວາມຮູ້ສຶກເປັນເຈົ້າຂອງສະຖານສຶກສາ

**ມາດຕະຖານທີ່ 18 : ອາຄານສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກສຳລັບການຮຽນ-ການສອນ**

**ຕົວຊີ້ວັດ**

1. ມີສະຖານທີ່ຕັ້ງ,ເດີ່ນປຸກສ້າງ ຕາມ ***ມາດຕາ 4*** ຂອງຂໍ້ກຳນົດວ່າດ້ວຍມາດຕະຖານ ແບບ ອາຄານ, ຫ້ອງຮຽນ,ເດີ່ນ ແລະເຄື່ອງເຟີນີເຈີ້ ຂອງໂຮງຮຽນປະຖົມສຶກສາ.
2. ມີແຜນຜັງບໍລິເວນໂຮງຮຽນຕາມ ***ມາດຕາ 5*** ຂອງຂໍ້ກຳນົດວ່າດ້ວຍມາດຕະຖານ ແບບ ອາຄານ, ຫ້ອງຮຽນ,ເດີ່ນ ແລະເຄື່ອງເຟີນີເຈີ້ ໂຮງຮຽນປະຖົມສຶກສາ.
3. ມີແຜນຜັງ ອາຄານຮຽນ, ຂະໜາດອາຄານຮຽນຕາມ ***ມາດຕາ 6*** ຂອງຂໍ້ກຳນົດວ່າດ້ວຍມາດຕະຖານ ແບບ ອາຄານ, ຫ້ອງຮຽນ,ເດີ່ນ ແລະເຄື່ອງເຟີນີເຈີ້ ໂຮງຮຽນປະຖົມສຶກສາ.
4. ມີຫ້ອງຮຽນ,ຂະໜາດຂອງຫ້ອງຮຽນຕາມ ***ມາດຕາ 7*** ຂອງຂໍ້ກຳນົດວ່າດ້ວຍມາດຕະຖານ ແບບ ອາຄານ, ຫ້ອງຮຽນ,ເດີນ ແລະເຄື່ອງເຟີນີເຈີ ໂຮງຮຽນປະຖົມສຶກສາ.
5. ມີເຄື່ອງເຟີນີເຈີ້: ລວງສູງ, ລວງກ້ວາງ, ລວງຍາວຂອງໂຕະ-ຕັ່ງ ສຳລັບຫ້ອງດ່ຽວ, ຫ້ອງຄວບ ໃຫ້ປະຕິບັດ ຕາມ ***ມາດຕາ 8*** ຂອງຂໍ້ກຳນົດວ່າດ້ວຍມາດຕະຖານ ແບບ ອາຄານ, ຫ້ອງຮຽນ,ເດີນ ແລະເຄື່ອງເຟີນີເຈີ ສຳລັບໂຮງຮຽນປະຖົມສຶກສາ.

| ມາດຕະຖານທີ່ 19 : ການຄຸ້ມຄອງ ແລະ ກິດລະບຽບຂອງໂຮງຮຽນ |
|---|

**ຕົວຊີ້ວັດ**

1. ໂຮງຮຽນໄດ້ປະຕິບັດຕາມຫຼັກການຄຸ້ມຄອງ ແລະ ກົດລະບຽບໂຮງຮຽນຊັ້ນປະຖົມສຶກສາ ໃຫ້ປະຕິບັດຕາມຫຼັກການຄຸ້ມຄອງ ແລະ ກົດລະບຽບຂອງໂຮງຮຽນ ທີ່ກະຊວງໄດ້ອະນຸມັດນຳໃຊ້ຜ່ານມາແລ້ວ( ເອກະສານພິມ ປີ 1997)

## III. ມາດຕະຖານດ້ານຂະບວນການ (ມີ 5 ມາດຖານ ແລະ 28 ຕົວຊີ້ວັດ)

| ມາດຕະຖານທີ່ 20 : ການຈັດຕັ້ງ - ໂຄງສ້າງ ແລະ ການບໍລິຫານງານຢ່າງເປັນ ລະບົບ, ຄົບວົງຈອນໃຫ້ບັນລຸເປົ້າໝາຍການສຶກສາ |
|---|

**ຕົວຊີ້ວັດ**

1. ມີການຈັດຈັດຕັ້ງ, ມີໂຄງຮ່າງ ແລະ ມີໂຄງສ້າງການບໍລິຫານທີ່ຊັດເຈັນ.
2. ມີແນວຄິດປັດຊະຍາ, ມີຫຼັກໝັ້ນ, ມີແຜນພັດທະນາ, ແຜນການດຳເນີນງານຂອງໂຮງຮຽນ ແລະ ຕົວຊີ້ວັດຄວາມສຳເລັດຂອງແຜນດຳເນີນງານ.
3. ມີການປະຕິບັດຕາມແຜນການ.
4. ມີການສົ່ງເສີມການເຮັດວຽກເປັນທີມ.
5. ມີການນິເທດ, ຕິດຕາມ, ປະເມີນຜົນການຮຽນປຽບທຽບກັບເປົ້າໝາຍຢ່າງຕໍ່ເນື່ອງ.
6. ມີລະບົບຂໍ້ມູນຂ່າວສານເທດຄົບຖ້ວນ, ຖືກຕ້ອງຖືກກັບຄວາມຕ້ອງການແລະ ທັນ ຕໍ່ການໃຊ້ງານ.

7. ມີການບັນທຶກ ແລະ ລາຍງານຜົນການປະເມີນທຸກຄັ້ງເພື່ອລາຍງານຕໍ່ຂັ້ນເທິງທີ່ທິດຕົນ
8. ມີການນຳຂໍ້ມູນ ແລະ ຜົນການປະເມີນໄປໃຊ້ໃນການຕັດສິນໃຈ ແລະ ປັບປຸງແຜນງານ.

**ມາດຕະຖານທີ່ 21 : ສົ່ງເສີມຄວາມສຳພັນ ແລະ ຄວາມຮ່ວມມືກັບຊຸມຊົນໃນການພັດທະນາການສຶກສາ.**

**ຕົວຊີ້ວັດ**

1. ຜູ້ບໍລິຫານ ແລະ ຄູສ້າງຄວາມສຳພັນທີ່ດີກັບກັບຊຸມຊົນໃນການຮ່ວມກັນຈັດການສຶກສາ.
2. ມີການປະຊາສຳພັນເພື່ອສ້າງຄວາມເຂົ້າໃຈໃຫ້ບຸກຄະລາກອນໃນສະຖານສຶກສາ ແລະຊຸມຊົນເຫັນຄວາມສຳຄັນໃນການຈັດການສຶກສາຮ່ວມກັນ.
3. ມີການປະຊາສຳພັນກິດຈະກຳຂອງສະຖານສຶກສາຕໍ່ຊຸມຊົນຢ່າງສຳໝ່ຳສະເໝີ.
4. ຜູ້ປົກຄອງ ແລະ ຊຸມຊົນເຂົ້າມາມີບົດບາດໃນການພັດທະນາການສຶກສາ

**ມາດຕະຖານທີ່ 22 : ສະຖານສຶກສາມີການຈັດກິດຈະກຳ ແລະ ການຮຽນ-ການສອນໂດຍເນັ້ນຜູ້ຮຽນເປັນໃຈກາງ**

**ຕົວຊີ້ວັດ** :

1. ມີການຈັດກິດຈະກຳການຮຽນ-ການສອນຢ່າງຫຼາກຫຼາຍ ເໝາະສົມກັບສະພາບແວດລ້ອມ ແລະ ສະ ໜອງ ຕາມຄວາມຕ້ອງການຂອງຜູ້ຮຽນ.
2. ມີການຈັດກິດຈະກຳການຮຽນ-ການສອນທີ່ກະຕຸ້ນໃຫ້ຜູ້ຮຽນຮູ້ຈັກຄິດວິເຄາະ, ຄິດສັງເຄາະ, ຄິດສ້າງສັນ, ຄິດແກ້ໄຂບັນຫາ ແລະ ຕັດສິນໃຈ.
3. ມີການຈັດກິດຈະກຳການຮຽນ-ການສອນທີ່ກະຕຸ້ນໃຫ້ຜູ້ຮຽນຮູ້ຈັກສຶກສາຫາຄວາມຮູ້, ສະແຫວງຫາຄຳຕອບ ແລະ ສ້າງອົງຄວາມຮູ້ດ້ວຍຕົນເອງ.
4. ມີການນຳໃຊ້ພູມປັນຍາທ້ອງຖິ່ນ, ເທັກໂນໂລຢີ ແລະ ສື່ທີ່ເໝາະສົມມາໝູນໃຊ້ເຂົ້າໃນການຈັດການຮຽນ-ການສອນ.
5. ມີການຈັດກິດຈະກຳເພື່ອຝຶກ ແລະ ສົ່ງເສີມຄຸນະພາບ ແລະ ຈາລິຍະທຳຂອງຜູ້ຮຽນ.
6. ມີການຈັດກິດຈະກຳການຮຽນ-ການສອນໃຫ້ຜູ້ຮຽນໄດ້ຮັບການພັດທະນາອາລົມຈິດຢ່າງຄົບຖ້ວນທັງດ້ານດົນຕີ, ສິນລະປະ ແລະ ກິລາ.

7. ສົ່ງເສີມຄວາມຮູ້ດ້ານກົດໝາຍ,ຮູ້ການທຳງານຮ່ວມກັບຜູ້ອື່ນແລະຄວາມຮັບຜິດຊອບຮ່ວມກັນ
8. ມີການປະເມີນພັດທະນາການຂອງຜູ້ຮຽນດ້ວຍວິທີການທີ່ຫຼາກຫຼາຍ ແລະ ຕໍ່ເນື່ອງ.
9. ມີການຈັດກິດຈະກຳໃຫ້ຜູ້ຮຽນຮັກສະຖານສຶກສາຂອງຕົນ ແລະ ມີຄວາມກະຕືລືລົ້ນໃນການໄປຮຽນ.

**ມາດຕະຖານທີ່ 23 : ສະຖານສຶກສາມີການສົ່ງເສີມ ແລະພັດທະນາບຸກຄະລາກອນ-ຄູ ຕາມຄວາມຈຳເປັນ ແລະເໝາະສົມເປັນປົກກະຕິ**

**ຕົວຊີ້ວັດ :**

1. ຈັດຄູເຂົ້າສອນຕາມການກຳນົດເວລາ,ຕາມຄວາມຮູ້ຄວາມສາມາດຫຼືຄວາມຖະໜັດ.
2. ຄູໄດ້ຮັບການພັດທະນາກ່ຽວກັບວິທີສິດສອນ ຫຼືໄດ້ປະຕິບັດງານຢ່າງຕໍ່ເນື່ອງ ແລະສອດຄ່ອງກັບສະພາບການປ່ຽນແປງ.
3. ສົ່ງເສີມການເຮັດວຽກເປັນທີມ

**ມາດຕະຖານທີ່ 24 : ມີການຈັດການຮຽນ-ການສອນທີ່ສອດຄ່ອງກັບຫຼັກສູດ,ຄວາມຕ້ອງການຂອງຜູ້ຮຽນແລະທ້ອງຖິ່ນ.**

**ຕົວຊີ້ວັດ :**

1. ມີການພັດທະນາຫຼັກສູດທ້ອງຖິ່ນໃຫ້ສອດຄ່ອງກັບສະພາບ ແລະ ຄວາມຕ້ອງການຂອງທ້ອງຖິ່ນໂດຍໃຫ້ຊຸມຊົນເຂົ້າມາມີສ່ວນຮ່ວມ.
2. ມີຫົວຄິດປະດິດສ້າງໃນການຈັດການຮຽນ-ການສອນໃຫ້ສອດຄ່ອງກັບຫຼັກສູດ,ຄວາມຕ້ອງການຂອງຜູ້ຮຽນ,ຂອງທ້ອງຖິ່ນ ຕາມສະພາບແວດລ້ອມ ແລະເສດຖະກິດ-ສັງຄົມໃຫ້ສາມາດເຊື່ອມຍິງແກ້ໄຂບັນຫາທ້ອງຖິ່ນໄດ້.
3. ສົ່ງເສີມການຈັດກິດຈະກຳການເຄື່ອນໄຫວນອກຫຼັກສູດໃຫ້ຜູ້ຮຽນເປັນປົກກະຕິ.

ສູນຮັບປະກັນຄຸນນະພາບສະເໜີການກຳນົດຂອບເຂດພຽງ 24 ມາດຕະຖານ ແລະ 115 ຕົວຊີ້ວັດ ສຳລັບ ການປະເມີນຄຸນນະພາບທັງພາຍໃນ ແລະ ຈາກພາຍນອກເພື່ອສະເໜີຈັດກອງປະຊຸມຜ່ານ ແລ້ວ ນຳສະເໜີຂັ້ນເທິງພິຈາລະນາອະນຸມັດທົດລອງນຳໃຊ້ໃນໂອກາດຕໍ່ໄປ.

**ມາດຕະຖານທີ່ 25 : ການປະເມີນ ແລະ ການຮັບຮອງມາດຕະຖານການສຶກສາ ຊັ້ນປະຖົມສາຍສາມັນ ທັງພາກລັດ ແລະ ພາກເອກະຊົນ.**

**ຕົວຊີ້ວັດ :**

1. ມີການດຳເນີນການປະເມີນພາຍໃນຈາກສະຖານສຶກສາ ແລະ ໜ່ວຍງານຕົ້ນສັງກັດ,ມີບົດສະຫຼຸບລາຍງານຕາມແບບຟອມທີ່ກະຊວງສຶກສາທິການອະນຸມັດ.
2. ມີການກວດສອບ ແລະ ປະເມີນຈາກໜ່ວຍງານພາຍນອກ
3. ພັດທະນາຫຼັກສູດທ້ອງຖິ່ນໃຫ້ສອດຄ່ອງກັບສະພາບ ແລະ ຄວາມຕ້ອງການຂອງທ້ອງຖິ່ນໂດຍໃຫ້ຊຸມຊົນເຂົ້າມາມີສ່ວນຮ່ວມ.
4. ມີທັດສະນະຄິດປະດິດສ້າງໃນການຈັດການຮຽນ-ການສອນໃຫ້ສອດຄ່ອງກັບຫຼັກສູດ,ຄວາມຕ້ອງການຂອງຜູ້ຮຽນ,ຂອງທ້ອງຖິ່ນ ຕາມສະພາບແວດລ້ອມ ແລະເສດຖະກິດ-ສັງຄົມໃຫ້ສາມາດເຊື່ອມຍິງແກ້ໄຂບັນຫາທ້ອງຖິ່ນໄດ້.
5. ສົ່ງເສີມການຈັດກິດຈະກຳການເຄື່ອນໄຫວນອກຫຼັກສູດໃຫ້ຜູ້ຮຽນເປັນປົກກະຕິ.

ສະບັບຮ່າງ

Filename: Basic Education S
Directory: C:\Documents and Settings\Pe\My Documents
Template: C:\Documents and Settings\Pe\Application Data\Microsoft\Templates\Normal.dotm
Title: ´¾©«¾-©É¾-°øÉ»¼-,´¾©«¾-©É¾-¢½®¸-¡¾- Áì½ ´¾©«¾-©É¾-¯ñ©Ã¥ ´óÀº¡½¦¾-¦½ À²¾½:
Subject:
Author: vanhsay
Keywords:
Comments:
Creation Date: 20/4/2009 10:11:00 AM
Change Number: 2
Last Saved On: 20/4/2009 10:11:00 AM
Last Saved By: Vansay
Total Editing Time: 4 Minutes
Last Printed On: 21/4/2009 4:06:00 PM
As of Last Complete Printing
Number of Pages: 12
Number of Words: 2,117 (approx.)
Number of Characters: 12,070 (approx.)